ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------

ກະຊວງສາທາລະນະສຸກ ເລກທີ 08 /ກຊສ

ນະຄອນຫລວງວຽງຈັນ, ວັນທີ 04 ມັງກອນ 2005

# ຂໍ້ຕົກລົງຂອງກະຊວງສາທາລະນະສຸກວ່າດ້ວຍ ບັນຊີປະເພດຢາເສບຕິດ, ວັດຖຸອອກລິດຕໍ່ຈິດ-ປະສາດ ແລະ ສານເຄມີຕົ້ນ

- ອີງຕາມ ກົດໝາຍອາດຢາ, ມາດຕາ 135 (ສະບັບດັດແກ້);
- ອີງຕາມ ກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດ ມາດຕາ 18 (ການຈັດປະເພດຢາ);
- ອີງຕາມ 3 ສົນທິສັນຍາຂອງອົງການສະຫະປະຊາຊາດ.
  - ປີ 1961 ວ່າດ້ວຍຢາເສບຕິດ;
  - ປີ 1971 ວ່າດ້ວຍວັດຖຸອອກລິດຕໍ່ຈິດ-ປະສາດ;
  - ປີ 1988 ວ່າດ້ວຍການຕ້ານການລັກລອບຄ້າຂາຍຢາເສບຕິດ ແລະ ວັດຖຸອອກລິດຕໍ່ຈິດ-ປະສາດ, ມາດຕາ 12 ວ່າດ້ວຍສານເຄມີທີ່ມັກຖືກລັກລອບນຳໃຊ້ເລື້ອຍ ເຂົ້າໃນການຜະລິດຢາເສບຕິດ ແລະ ວັດຖຸອອກລິດຕໍ່ຈິດ-ປະສາດ ໂດຍເອີ້ນຫຍໍ້ວ່າ: " ສານເຄມີຕົ້ນ".
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສາທາລະນະສຸກ ສະບັບເລກທີ 020 /ນຍ, ລົງວັນທີ 9 ມີນາ 1999.
- ອີງຕາມ ການສະເໜີຂອງກົມອາຫານ ແລະ ຢາ ສະບັບເລກທີ 2683/04.ກອຢ, ລົງວັນທີ 31/8/04.

## ລັດຖະມົນຕີວ່າການກະຊວງສາທາລະນະສຸກຕົກລົງ:

**ມາດຕາ 1.** ກຳນົດບັນຊີປະເພດຢາເສບຕິດ, ວັດຖຸອອກລິດຕໍ່ຈິດ-ປະສາດ ແລະ ສານເຄມີຕົ້ນທີ່ອະນຸຍາດໃຫ້ນຳເຂົ້າເພື່ອຈຳໜ່າຍ ຫຼື ຜະລິດ ແລະ ນຳໃຊ້ໄດ້ຢູ່ ສປປ ລາວ ຊຶ່ງແບ່ງອອກເປັນ 3 ປະເພດບັນຊີດັ່ງນີ້:

I. ບັນຊີປະເພດຢາເສບຕິດທີ່ເປັນຢາປົວພະຍາດ ຫຼື ວັດຖຸດິບຜະລິດຢາມີ 5 ລາຍການຄື:

1. Codeine phosphate/phosphate de codelne.
   (Codein, Kodein, Methylmorphin, Methylmorfin...)
2. Fentanyl citrate/Citrate de Fentanyl.
   (Fentaz, Haldid, Hypnorm, Leptanal, pentanyl, Phentanyl...)
3. Morphine hydrochloride/Chlorhydrate de Morphine.
   (Hipsedan, Mortha, Sedol, Spasma...)
4. Opium, Raw or Powder or Tincture.
5. Pethidine hydrochloride/Chlorhydrate de Pethidine.
   (Dolosal, Alodan, Demerol, Dispadal(ol), Dolantal(in,ol), Dolental)

II. ບັນຊີປະເພດວັດຖຸອອກລິດຕໍ່ຈິດ-ປະສາດທີ່ເປັນຢາປົວພະຍາດ ຫຼື ວັດຖຸດິບຜະລິດຢາມີ 12 ລາຍການ ຄື:

1. Barbital Sodlum/Barbital Sodique.
   (Barbitone Sodlum, Noctal, Veronal)
2. Bromazepam/Bromazepam.
   (Lectopam, Lesotan, Lexatin, Lexomil…)
3. Chlordiazepoxide hydrochloride/hydrochlorate de Chlordiazepoxide.
   (Diazepebrum, Elenium, Librium, Napoton...)
4. Clonazepam/Clonazepam.
   (Aklonil, Clonotril, Clozepan, Ravotril, Rivotril)
5. Clorazepate mono(di) potassium/Clorazepate mono(di) Potassique
   (Trans(x) ene, Tranxilium…)
6. Diazepam/Diazepam (Diapam, Faustan, Seduxen, Valium…)
7. Flunitrazepam/Flunitrazepam (Darkene, Fluni(mi)pam, Hypnodrom,…)
8. Midazolam/Midazolam
   (Doricum, Dormicum, Hypnovel, Sorenor,...)
9. Meprobamate/Meprobamate (Equanil, Diazemat, Civamate, Metaba Mate, Neutramate, Tranquanil…)
10. Nitrazepam/Nitrazepam.
    (Alodorm, Apooxazepam, Chlorazepam, Lagazepam, Eunoctin, Hypn Otin, Insomin, Mogadon, itrodiazepam, Ormodon,….)
11. Pentazocine hydrochloride/Chlorhydrate de Pentazocine.
    (Algopent, Dolofortin, Fortal, Fortwin, pentacina, pentafort, Talwin…)
12. Phenobarbital sodium/Phenobarbital sodique.
    (Gardenal sodium, Lepinal-natrium, Luminal sodium…)

III. ບັນຊີປະເພດສານເຄມີຕົ້ນ ແລະ ສານເຄມີສຳຮອງທີ່ມັກລັກລອບນຳໃຊ້ເລື້ອຍເຂົ້າໃນການຜະລິດຢາເສບຕິດ ແລະ ວັດຖຸອອກລິດຕໍ່ຈິດ-ປະສາດ.

\+ ອີງຕາມລຳດັບຄວາມສຳຄັນ ແລະ ຄວາມສ່ຽງສູງຕໍ່ການລັກລອບນຳໃຊ້ ເຂົ້າໃນການຜະລິດຢາເສບຕິດ, ສານເຄມີຕົ້ນ ແລະ ສານເຄມີສຳຮອງຈຶ່ງໄດ້ຈັດແບ່ງອອກເປັນ 3 ໝວດຄື:

ກ. **<u>ຕາຕະລາງບັນຊີ I</u>**: ແມ່ນບັນຊີສານເຄມີຕົ້ນທີ່ຄວບຄຸມພິເສດ ແລະ ມີການຄວບຄຸມໃນທຸກຂັ້ນຕອນ ເຊັ່ນ: ການຂໍອະນຸຍາດນຳເຂົ້າ, ການນຳເຂົ້າ-ສົ່ງອອກ, ການຜະລິດ, ການຈຳໜ່າຍ, ການຂົນສົ່ງ ແລະ ການນຳໃຊ້.

ຂ. **<u>ຕາຕະລາງບັນຊີ II</u>**: ແມ່ນບັນຊີສານເຄມີສຳຮອງທີ່ສາມາດປ່ຽນແທນສານເຄມີຕົ້ນຄວບຄຸມພິເສດໄດ້ດ້ວຍການສັງເຄາະ (ຕາມຕາຕະລາງບັນຊີ) ແລະ ມັກຖືກລັກລອບນຳໄປໃຊ້ເຂົ້າໃນການຜະລິດຢາເສບຕິດ ແລະ ວັດຖຸອອກລິດຕໍ່ຈິດ-ປະສາດ.

ຄ. **ຕາຕະລາງບັນຊີ III**: ແມ່ນບັນຊີສານເຄມີທີ່ຕ້ອງໄດ້ເອົາໃຈໃສ່ຕິດຕາມກວດກາການນຳເຂົ້າ, ຈຳໜ່າຍ ຂົນສົ່ງ ແລະ ການນຳໃຊ້.

| Strictly Control List Schedule I (ຕາຕະລາງບັນຊີ I) | Control List Schedule II (ຕາຕະລາງບັນຊີ II) | Watch List Schedule (ຕາຕະລາງບັນຊີ III) |
|---|---|---|
| 1. ACETIC ANHYDRIDE | 1. ACETONE | 1. ACETIC ACID, GLACIAL |
| 2. N-ACETYLANTHRANILIC ACID | 2. ANTHRANILIC ACID | 2. CAFFEINE |
| 3. ERGOMETRINE | 3. METHYL ETHYL KETONE ( MEK ) | 3. METHYL ISO BUTYL KETONE (MIBK) |
| 4. ERGOTAMINE | 4. BARIUM SULPHAT | 4. PHOSPHOROUS TRICHLORIDE |
| 5. EPHEDRINE | 5. BENZALDEHYDE | 5. THIONYL CHLORIDE |
| 6. ISOSAFROLE | 6. BENZAL CYANIDE | |
| 7. LYSERGIC ACID | 7. DIETHYLAMINE | |
| 8. METHYLENE DIOXYPHENYL 2-ROPANONE | 8. 1-PHENYL2-PROPANONE | |
| 9. NOREPHEDRINE | 9. ETHYL ETHER | |
| 10. PIPERONAL | 10. HYDROCHLORIC ACID | |
| 11. PSEUDOEPHEDRINE | 11. METHYLAMINE | |
| 12. SAFROLE | 12. NITROETHANE | |
| | 13. PHENYLACETIC ACID | |
| | 14. PIPERIDINE | |
| | 15. POTASSIUM PERMENGANATE | |
| | 16. PYRIDINE | |
| | 17. SULFURIC ACID | |
| | 18. TOLUENE | |

**ມາດຕາ 2.** ຜູ້ທີ່ມີຈຸດປະສົງຢາກສັ່ງຊື້, ນຳເຂົ້າ- ສົ່ງອອກ, ຜະລິດຕ້ອງມີແຜນການປະຈຳປີ ແລະ ໄດ້ຮັບໃບອະນຸຍາດທາງການຈາກກະຊວງສາທາລະນະສຸກເທົ່ານັ້ນ.

**ມາດຕາ 3.** ລາຍການຢາເສບຕິດ, ວັດຖຸອອກລິດຕໍ່ຈິດ-ປະສາດ ແລະ ເຄມີຕົ້ນຕາມ 3 ບັນຊີຂ້າງເທິງສາມາດຍົກຍ້າຍຈາກຕາຕະລາງບັນຊີໜຶ່ງໄປຫາອີກບັນຊີອື່ນ ຫຼື ຍົກເລີກ ຫຼື ເພີ່ມເຕີມ ໄດ້ຕາມການຕົກລົງຂອງກະຊວງສາທາລະນະສຸກໃນແຕ່ລະໄລຍະ.

**ມາດຕາ 4.** ມອບໃຫ້ກົມອາຫານ ແລະ ຢາ ເປັນຈຸດໃຈກາງປະສານງານກັບພາກສ່ວນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 5.** ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປຂໍ້ກຳນົດກົດລະບຽບທີ່ໄດ້ປະກາດໃຊ້ໃນເມື່ອກ່ອນຫາກຂັດກັບຂໍ້ຕົກລົງສະບັບນີ້ລ້ວນແຕ່ຖືກລົບລ້າງ.

ລັດຖະມົນຕີວ່າການກະຊວງສາທາລະນະສຸກ

ດຣ. ປອນເມກ ດາລາລອຍ